ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 153 /ສພຂ.ຊຍ
ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2024 ທິດທາງແຜນການ ປະຈຳປີ 2025 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ຂອງອົງການກວດສອບປະຈຳພາກເໜືອ1

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 59 ກອງປະຊຸມສະໄໝສາມັນ ປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານຂອງອົງການກວດສອບປະຈຳພາກເໜືອ1 ສະບັບເລກທີ 714/ອກສ.ພໜ, ລົງວັນທີ 19 ທັນວາ 2024.

ຜ່ານການປະກອບຄຳເຫັນ, ຄົ້ນຄວ້າ ແລະ ພິຈາລະນາຢ່າງເລິກເຊິ່ງ ຂອງ ສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024, ທິດທາງແຜນການ ປີ 2025 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ຂອງອົງການກວດສອບປະຈຳພາກເໜືອ1 ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງ ອົງການກວດສອບປະຈຳພາກເໜືອ1**

**1. ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2024**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບປະຈຳພາກເໜືອ1 ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ສຳເລັດການກວດສອບຢູ່ແຂວງໄຊຍະບູລີ ທັງໝົດ 17 ຫົວໜ່ວຍ. ກອງປະຊຸມເຫັນດີເປັນເອກະພາບຕໍ່ການຕີລາຄາຜົນໄດ້ຮັບ, ຂໍ້ຄົງຄ້າງ ໃນການເຄື່ອນໄຫວວຽກງານ ຂອງອົງການກວດສອບປະຈຳພາກເໜືອ1.

**2. ຜົນການກວດສອບຄືນການຈັດຕັ້ງປະຕິບັດ ການແກ້ໄຂຜົນການກວດສອບ ຕາມມະຕິສະບັບເລກທີ 04/ສພຂ.ຊຍ, ລົງວັນທີ 13 ມັງກອນ 2024**

- ດ້ານລາຍຮັບທີ່ກວດເຫັນເພີ່ມ ຈຳນວນ 276,80 ລ້ານກີບ ເຊິ່ງໄດ້ຮັບການແກ້ໄຂແລ້ວ ດ້ວຍຮູບການມອບເຂົ້າງົບປະມານ.



ສະແກນດ້ວຍ CamScanner

3. ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2023

3.1 ບົດສະຫຼຸບຂາດຕົວງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2023

1) **ດ້ານລາຍຮັບ:** ປະຕິບັດໄດ້ ຈໍານວນ 668,54 ຕື້ກີບ ເທົ່າກັບ 132,45% ຂອງແຜນການ, ກວດສອບເຫັນເພີ່ມ 0,24 ຕື້ກີບ, ລາຍຮັບລວມທັງໝົດ 668,78 ຕື້ກີບ;

2) **ດ້ານລາຍຈ່າຍ:** ປະຕິບັດໄດ້ ຈໍານວນ 601,44 ຕື້ກີບ ເທົ່າກັບ 97,59% ຂອງແຜນການປີ ແລະ ບໍ່ມີລາຍຈ່າຍທີ່ກວດສອບເຫັນເພີ່ມ;

3) **ການດຸ່ນດ່ຽງງົບປະມານ:** ປະຕິບັດໄດ້ເກີນດຸນ ຈໍານວນ 67,10 ຕື້ກີບ.

3.2 ຜົນການກວດສອບ ບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງ ແຂວງ ປະຈໍາປີ 2023

1) **ດ້ານລາຍຮັບ:** ຜ່ານການກວດສອບການຈັດຕັ້ງປະຕິບັດລາຍຮັບງົບປະມານແຫ່ງລັດ ປະຈໍາປີ 2023 ກວດສອບເຫັນລາຍຮັບທີ່ບໍ່ມອບເຂົ້າງົບປະມານ ຈໍານວນ 241,66 ລ້ານກີບ. ໃນນີ້:
   - ຂະແໜງຄຸ້ມຄອງຊັບສິນແຫ່ງລັດ ຈໍານວນ 42,8 ລ້ານກີບ;
   - ພະແນກສຶກສາທິການ ແລະ ກິລາ ຈໍານວນ 198,82 ລ້ານກີບ.

2) **ດ້ານລາຍຈ່າຍ:** ຜ່ານການກວດສອບການຈັດຕັ້ງປະຕິບັດລາຍຮັບງົບປະມານແຫ່ງລັດ ປະຈໍາປີ 2023 ກວດສອບບໍ່ເຫັນລາຍຈ່າຍເພີ່ມ.

3) **ການຄຸ້ມຄອງລາຍຮັບ:**
   - ກວດສອບເຫັນສ່ວຍສາອາກອນເມືອງ ໄຊຍະບູລີ, ປາກລາຍ ແລະ ເມືອງແກ່ນທ້າວ ໄດ້ຄຸ້ມຄອງຫົວໜ່ວຍຈຸນລະວິສາຫະກິດທີ່ມີລາຍຮັບທຸລະກິດປະຈໍາປີ ຫຼາຍກວ່າ 400 ລ້ານກີບ ຈໍານວນ 86 ຫົວໜ່ວຍ, ຍັງບໍ່ໄດ້ເອົາເຂົ້າຢູ່ໃນລະບົບອາກອນມູນຄ່າເພີ່ມ;
   - ກວດສອບເຫັນໜີ້ຕ້ອງຮັບຂະແໜງຄຸ້ມຄອງຊັບສິນແຫ່ງລັດທີ່ຍັງບໍ່ສາມາດແຍກປະເພດໜີ້ ຈໍານວນ 5,42 ຕື້ກີບ.

4) **ການຄຸ້ມຄອງລາຍຈ່າຍ:**
   - ກວດສອບເຫັນການນໍາໃຊ້ງົບປະມານເກີນແຜນເຂົ້າໃນວຽກງານຈໍາເປັນຂອງແຂວງ, ເມືອງ ແລະ ບັນດາພະແນກການ ຈໍານວນ 20,23 ຕື້ກີບ.

5) **ການຄຸ້ມຄອງຊັບສິນຂອງລັດ:**
   - ກວດສອບເຫັນສະຖິຕິຈາກການເຊົ່າ-ສໍາປະທານທີ່ດິນຈາກຂະແໜງຄຸ້ມຄອງຊັບສິນຂອງລັດ ຈໍານວນ 16 ຫົວໜ່ວຍ, ແຕ່ສະຖິຕິຂອງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ມີຈໍານວນ 229 ຫົວໜ່ວຍ, ຜິດດ່ຽງ 213 ຫົວໜ່ວຍ;
   - ກວດສອບເຫັນພາສີປະຈໍາແຂວງ ທີ່ໄດ້ຄິດໄລ່ມູນຄ່າພາສີ-ອາກອນ ປະເພດລົດໃຫຍ່ ທີ່ໄດ້ລັກລອບໜີພາສີນໍາເຂົ້າ ຈໍານວນ 11 ຄັນ, ມູນຄ່າ 6,44 ຕື້ກີບ ທີ່ຍັງບໍ່ທັນໄດ້ປະມູນຂາຍຕາມລະບຽບການ.

6) **ການຄຸ້ມຄອງໂຄງການລົງທຶນຂອງລັດ:**
   - ກວດສອບເຫັນໂຄງການທະລຸເສັ້ນທາງເຊື່ອມຕໍ່ສົ້ນຂົວຂ້າມນ້ຳຮຸ່ງ ບ້ານນາເລົາ-ບ້ານນາຕໍ່ໃຫຍ່ ມູນຄ່າ 1,81 ຕື້ກີບ ທີ່ບໍ່ໄດ້ຜ່ານການຮັບຮອງຈາກສະພາປະຊາຊົນແຂວງ;
   - ກວດສອບເຫັນພະແນກແຜນການ ແລະ ການລົງທຶນ ບໍ່ໄດ້ສະຫຼຸບ ຕິດຕາມ ບ້ວງເງິນເກີນແຜນຂອງແຂວງທີ່ໄດ້ຊໍາລະໂຄງການລົງທຶນຂອງລັດຈໍານວນ 4 ໂຄງການ ມູນຄ່າ 1,75 ຕື້ກີບ. ໃນນີ້: ມີ 1 ໂຄງການຊໍາລະເກີນມູນຄ່າ 0,64 ຕື້ກີບ.



ສະແກນດ້ວຍ CamScanner

**ມາດຕາ 2 ຮັບຮອງເອົາ ທິດທາງແຜນການ ປີ 2025**

ກອງປະຊຸມ ຮັບຮອງເອົາແຜນການເຄື່ອນໄຫວ ວຽກງານກວດສອບ ປະຈໍາປີ 2025 ຢູ່ ແຂວງໄຊຍະບູລີ ຄື: ກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານຂອງແຂວງ ປະຈໍາປີ 2024 ຈໍານວນ 14 ຫົວໜ່ວຍ, ກວດສອບຫົວຂໍ້ສະເພາະ ຈໍານວນ 2 ຫົວໜ່ວຍ ແລະ ກວດສອບລັດວິສາຫະກິດ ຈໍານວນ 1 ຫົວໜ່ວຍ, ລວມທັງໝົດ ຈໍານວນ 17 ຫົວໜ່ວຍ, ລາຍລະອຽດດັ່ງນີ້: (1) ຫ້ອງວ່າການແຂວງ; (2) ພະແນກແຜນການ ແລະ ການລົງທຶນ; (3) ຂະແໜງງົບປະມານ; (4) ຄັງເງິນແຫ່ງຊາດປະຈໍາແຂວງ; (5) ພະແນກໂຍທາທິການ ແລະ ຂົນສົ່ງ; (6) ພະແນກກະສິກໍາ ແລະ ປ່າໄມ້; (7) ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ; (8) ພະແນກແຮງງານ ແລະ ສະຫວັດດີການສັງຄົມ; (9) ພະແນກຍຸຕິທໍາ; (10) ພະແນກອຸດສາຫະກໍາ ແລະ ການຄ້າ; (11) ພະແນກພະລັງງານ ແລະ ບໍ່ແຮ່; (12) ພະແນກ ສຶກສາທິການ ແລະ ກິລາ; (13) ພະແນກສາທາລະນະສຸກ ແລະ (14) ໂຮງໝໍແຂວງ; (15) ສ່ວຍສາອາກອນປະຈໍາແຂວງ (ກວດສອບສະເພາະ), (16) ຂະແໜງຄຸ້ມຄອງຊັບສິນແຫ່ງລັດ (ກວດສອບສະເພາະ) ແລະ (17) ກວດສອບເອກະສານລາຍງານການເງິນຂອງລັດວິສາຫະກິດນໍ້າປະປາແຂວງ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດຕໍ່ວຽກງານ ອົງການກວດສອບປະຈໍາພາກເໜືອ1 ຢູ່ແຂວງໄຊຍະບູລີ**

ກອງປະຊຸມຮັບຮອງເອົາ 5 ມາດຕະການລວມ ແລະ 8 ມາດຕະການແນະນໍາປັບປຸງແກ້ໄຂຜົນການກວດສອບຕາມການສະເໜີຂອງອົງການກວດສອບປະຈໍາພາກເໜືອ1, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ບັນລຸຕາມຈຸດປະສົງທີ່ວາງໄວ້, ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1. **ອົງການປົກຄອງແຂວງ**
   1.1 ສືບຕໍ່ປະຕິບັດການແກ້ໄຂຜົນການກວດສອບ ຕາມມາດຕາ 40 ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໃຫ້ເປັນຮູບປະທໍາ ແລະ ກໍານົດການແກ້ໄຂຜົນການກວດສອບ ເປັນເງື່ອນໄຂໜຶ່ງໃນການປະເມີນຜົນການແຂ່ງຂັນຮັກຊາດ ແລະ ພັດທະນາ, ການກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງ ແລະ ໜັກແໜ້ນ, ການແຕ່ງຕັ້ງ, ຍົກຍ້າຍປ່ຽນແທນ ບຸກຄະລາກອນໃນແຕ່ລະຂັ້ນ;
   1.2 ຊີ້ນໍາພະແນກການເງິນແຂວງ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອເກັບກູ້ເອົາລາຍຮັບທີ່ກວດເຫັນເພີ່ມຈາກການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດແຂວງ ປີ 2023 ແລະ ແກ້ໄຂຜົນການກວດສອບຄ້າງໃນປີຜ່ານມາ ເຂົ້າໃນລະບົບງົບປະມານໃນປີ 2025;
   1.3 ຊີ້ນໍາພະແນກການເງິນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ວິເຄາະ, ວິໄຈ-ໄຈ້ແຍກ ໜີ້ຕ້ອງຮັບສ່ວຍສາອາກອນ, ຊັບສິນ, ໜີ້ຕ້ອງຮັບອື່ນໆ ແລະ ຍອດເງິນຄ້າງໃນບັນຊີຝາກຄັງເງິນແຫ່ງຊາດປະຈໍາແຂວງ ໃຫ້ລະອຽດ ແລະ ສືບຕໍ່ແກ້ໄຂຕາມຄໍາແນະນໍາວ່າດ້ວຍການແກ້ໄຂຜົນການກວດສອບໃຫ້ມີຜົນສໍາເລັດ;
   1.4 ສືບຕໍ່ຊີ້ນໍາ ບັນດາເປົ້າໝາຍຖືກກວດສອບ ເພີ່ມທະວີຄວາມຮັບຜິດຊອບໃນການໃຫ້ການຮ່ວມມືປະສານສົມທົບ, ອໍານວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນ ແລະ ເຂົ້າຮ່ວມວຽກງານການແກ້ໄຂຜົນການກວດສອບ.
2. **ອົງການກວດສອບປະຈໍາພາກເໜືອ**
   2.1 ສຸມໃສ່ ກວດສອບບັນດາຫົວໜ່ວຍງົບປະມານ ຕາມເປົ້າໝາຍ ຈໍານວນ 17 ຫົວໜ່ວຍ ແລະ ຕິດຕາມ ກວດກາ ແລະ ຊຸກຍູ້ການແກ້ໄຂຜົນການກວດສອບ ໃນໄລຍະຜ່ານມາ ຕາມມະຕິສະພາປະຊາຊົນແຂວງ ເພື່ອແກ້ໄຂຜົນການກວດສອບ ໃຫ້ເຂັ້ມງວດ;
   2.2 ເອົາໃຈໃສ່ປະຕິບັດກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໃຫ້ເຂັ້ມງວດ ແລະ ເປັນຮູບປະທໍາເປັນຕົ້ນ ມາດຕາ 36 ສິ່ງພິມລາຍງານຜົນການກວດສອບ, ມາດຕາ 41 ການຕິດຕາມ ແລະ ການກວດສອບຄືນການແກ້ໄຂຜົນການກວດສອບ;



ສະແກນດ້ວຍ CamScanner

2.3 ສືບຕໍ່ຈັດຕັ້ງປະຕິບັດກົນໄກ ການປະສານງານຢ່າງເປັນປົກກະຕິ ລະຫວ່າງອົງການກວດສອບປະຈໍາພາກເໜືອ1 ກັບ ສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ ແລະ ບັນດາເປົ້າໝາຍຖືກກວດສອບໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອແນໃສ່ແກ້ໄຂຜົນການກວດສອບໃຫ້ມີຄວາມສັກສິດ.

**ມາດຕາ 4 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ ອົງການປົກຄອງແຂວງ ຊີ້ນໍາບັນດາຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດມາດຕະການຕໍ່ກັບຜົນຂອງການກວດສອບ ຕາມມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການກວດສອບປະຈໍາພາກເໜືອ1 ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ, ບັນດາຄະນະກໍາມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງ ຢູ່ບັນດາເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້, ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງນິລັນ ຄໍາພັນເພັງ**



ສະແກນດ້ວຍ CamScanner